ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 3396 /ທຄຕລ..2025.......
ນະຄອນຫຼວງວຽງຈັນ, ວັນທີ:......03 NOV 2025.......

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາໂຮງພິມ ແລະ ບໍລິສັດທີ່ດໍາເນີນທຸລະກິດບໍລິການສິ່ງພິມ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ບໍລິການຜະລິດ ແບບຟອມ-ສິ່ງພິມ ເພື່ອນໍາໃຊ້ເຂົ້າໃນວຽກງານບໍລິການ ຂອງ ທຄຕລ , ດັ່ງມີລາຍການລຸ່ມນີ້:

| ລ/ດ | ລາຍການ | ຈໍານວນ | ລາຍລະອຽດ |
|---|---|---|---|
| 1. | ເຈ້ຍກາວປອກຮັດເງິນ | 600 ແກັດ | - 18*155 ມມ<br>- ການຫຸ້ມຫໍ່: 40 ກໍ້/ແກັດ |
| 2. | ເທບກາວຕິດຫົວແຊັກ | 800 ຖົງ | - ເຈ້ຍສະຕິກເກີ້ ສີແດງກ່ານ 2,5 * 8,5ຊມ,<br>- ການຫຸ້ມຫໍ່: 50 ແຜ່ນ/ຖົງນ້ອຍ, 10 ຖົງນ້ອຍ/1ຖົງໃຫຍ່ |
| 3. | ເຈ້ຍເອຕິແກັດ ແບບອ່ອນ | 70 ແກັດ | - ເຈ້ຍປອນ 55 gsm ຂະໜາດ 6,5 * 10cm, ພິມ 1 ສີ 1ໜ້າ;<br>- ການຫຸ້ມຫໍ່: 1.000 ໃບ/ແກັດ |
| 4. | ເຈ້ຍເອຕິແກັດ (ດ້ານຫຼັງ ຕັດມູມ) | 600 ຫໍ່ | - ເຈ້ຍກ່ອງແປ້ງ-ຫຼັງເທົາ 300gsm,ຂະໜາດ 15,6*6,8ຊມ;<br>- ການຫຸ້ມຫໍ່: 500 ໃບ/ຫໍ່ |
| 5. | ເຈ້ຍໜີບຫົວເງິນ | 10 ແກັດ | - ເຈ້ຍປອນ 60gsm, ຂະໜາດ 5*9 ຊມ,<br>- ການຫຸ້ມຫໍ່: 30 ກລ/ແກັດ |
| 6. | ເຈ້ຍພິມ ຫົວຈົດໝາຍ (ມີແຕ່ທ້າຍ-ບໍ່ມີຫົວຂໍ້) | 3,000 ໃບ | - ຂະໜາດ A4 21*29,7 ຊມ, ເຈ້ຍປອນ 80gsm, ພິມ 1 ສີ 1 ໜ້າ<br>- ການຫຸ້ມຫໍ່: 100 ໃບ/ຫໍ່ , 05ຫໍ່/ແພັກ |
| 7. | ເຈ້ຍພິມຫົວຈົດໝາຍພາສາລາວ (ມີເລກທີ) | 25,000 ໃບ | - ຂະໜາດ A4 21*29,7 ຊມ, ເຈ້ຍປອນ 80gsm, ພິມ 4 ສີ 1 ໜ້າ<br>- ການຫຸ້ມຫໍ່: 100 ໃບ/ຫໍ່ , 05ຫໍ່/ແພັກ |
| 8. | ເຈ້ຍພິມຫົວຈົດໝາຍພາສາອັງກິດ (ບໍ່ມີເລກທີ) | 6,000 ໃບ | |
| 9. | ຊອງຂາວໃສ່ບັດ ATM (ຊອງຕາໜ່າງ) | 20,000 ຊອງ | - ພິມ 1 ສີ 1 ໜ້າ, 11*20ຊມ<br>- ການຫຸ້ມຫໍ່: 50 ຊອງ/ແພັກ , 10ແພັກ/ແກັດ |

| | | | |
|---|---|---|---|
| 10. | ປຶ້ມຝາກລູກຫຼານ | 2,000 ຫົວ | - 13*7,7 ຊມ 16+4 ໜ້າ, ພິມ 4 ສີ ເຈ້ຍປອນ 100 gsm, ໜ້າປົກເຈ້ຍລາຍຜ້າ OPALE 160gsm<br>- ການຫຸ້ມຫໍ່: 100 ຫົວ/ແພັກ, 10 ແພັກ/ແກັດ |
| 11. | ປຶ້ມຝາກມີກຳນົດ (ທຸກສະກຸນເງິນ) | 25,000 ຫົວ | - 13*7,8 ຊມ 12+4 ໜ້າ, ພິມ 2 ສີ ເຈ້ຍປອນ 100gsm,<br>- ໜ້າປົກເຈ້ຍລາຍຜ້າ APOLE 160gsm<br>- ການຫຸ້ມຫໍ່: 100 ຫົວ/ແພັກ, 10 ແພັກ/ແກັດ |
| 12. | ຊອງເຫຼືອງກາງ A4 | 120,000 ຊອງ | - 9" * 12" ພິມ 4 ສີ 1 ໜ້າ |
| 13. | ໃບແຈ້ງປະເພດເງິນຮັບ-ຟ້າ | 2,000 ຫົວ | - ເຈ້ຍປອນ 70 gsm, ຂະໜາດ 9*19,5ຊມ ພິມ 1 ສີ 1 ໜ້າ; 100 ໃບ/ຫົວ.<br>- ການຫຸ້ມຫໍ່: 10 ຫົວ/ແພັກ, 5 ແພັກ/ມັດ |
| 14. | ໃບແຈ້ງປະເພດເງິນມອບ-ແດງ | 2,000 ຫົວ | - ເຈ້ຍປອນ 55 gsm, ຂະໜາດ 9*20,5 ຊມ ພິມ 1 ສີ 1 ໜ້າ; 100 ໃບ/ຫົວ.<br>- ການຫຸ້ມຫໍ່: 10 ຫົວ/ແພັກ, 5 ແພັກ/ມັດ |
| | **ໝາຍເຫດ:**<br>1. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ, ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າພຽງຢ່າງດຽວ.<br>2. ແຕ່ລະລາຍການແມ່ນຈະໄດ້ຈັດສົ່ງໃຫ້ ທຄຕລ 3 ຄັ້ງ: ຫ່າງກັນ 05 ເດືອນ ຫຼັງຈາກສົ່ງຄັ້ງທີ 01-02 ຕາມລາດັບ ແລະ ການຊໍາລະເງິນແມ່ນ ຕາມການຈັດສົ່ງແຕ່ລະຮອບ.<br>3. Artwork ແຕ່ລະໄລຍະອາດມີການປ່ຽນແປງ.<br>4. ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການ File ຮູບເພີ່ມຕື່ມ ສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງ 13/11/2025 ໃນໂມງລັດຖະການ. | | |

- **ເງື່ອນໄຂຂອງບໍລິສັດ, ໂຮງພິມ ມີຄວາມຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານດັ່ງນີ້:**
  - **ເອກະສານ ຊອງທີ 01:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດບໍລິການຜະລິດສິ່ງພິມ, ດຳເນີນທຸລະກິດ ຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021, 2022, 2023 ແລະ ຮ່າງແບບຟອມຂອງ ທຄຕລ ທີ່ຄັດຕິດມາພ້ອມນີ້ .
2. ກຳນົດຍື່ນລາຍລະອຽດຂ້າງເທິງ ສາມາດຍື່ນໄດ້ນັບຈາກ ວັນນີ້ ເຖິງ ວັນພະຫັດ, ທີ 13/11/2025ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍ PDF ເຂົ້າມາທີ່ E-mail: procurement@bcel.com.la ພ້ອມທັງສົ່ງສິນຄ້າຕົວຢ່າງໃຫ້ ທຄຕລ ທົດລອງນຳໃຊ້ (Test) ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

- **ເອກະສານ ຊອງທີ 02 (ປິດຊອງ):**

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມ ໃນວັນພະຫັດ, ທີ 20/11/2025 ເວລາ 9:00 ໂມງ ທີ່ ຊັ້ນ 05 ອາຄານ C.
2. ໃບສະເໜີລາຄາໃຫ້ລະບຸລາຄາ/ໜ່ວຍ ແລະ ມູນຄ່າລວມອາກອນທັງໝົດ ເປັນສະກຸນເງິນກີບໃຫ້ຄົບຖ້ວນ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/01/2026) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດສິນຄ້າຕົວຈິງ 1-2 ອັນ ທີ່ຖືກຕ້ອງຕາມ Spec/Artwork ທີ່ ທຄຕລ ລະບຸມາຜ່ານ ພາຍໃນ 14 ວັນ ແລະ ຕ້ອງມີຄວາມສາມາດຈັດສົ່ງສິນຄ້າສຳເລັດພາຍໃນ 45 ວັນ/ງວດ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ແຂວງ ສປປ ລາວ
ທະນາຄານ
ການຄ້າຕ່າງປະເທດລາວ
ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ນະຄອນຫຼວງວຽງຈັນ

**ນ. ສາຍສະໝອນ ຈັນທະຈັກ**

ຕິດຕໍ່ພົວພັນ:
021 213200 ຕໍ່ 414 ( ໂມງລັດຖະການ )

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ ( ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: